ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 2882 /ທຄຕລ...2026...
ນະຄອນຫຼວງວຽງຈັນ, ວັນທີ: 17 AUG 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ວຽກການປັບປຸງພາຍນອກອາຄານ A, B, C, D ທຄຕລ ສຳນັກງານໃຫຍ່ (ຂະຫຍາຍເວລາ).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາ ວຽກການສ້ອມແປງພາຍນອກອາຄານ A, B, C, D ທຄຕລ ສຳນັກງານໃຫຍ່ ເຊິ່ງຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໂດຍມີເນື້ອໃນດັ່ງນີ້:

**I. ເງື່ອນໄຂການປະກອບເອກະສານການປະມູນ ມີດັ່ງນີ້:**

1.1 ເອກະສານດ້ານລາຄາ: ໃບປະເມີນລາຄາລວມອາກອນມູນຄ່າເພີ່ມ 10% ຕ້ອງເປັນສະກຸນເງິນກີບ 1 ຊຸດ;

1.2 ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/11/2026) ຫຼື ແຊັກທີ່ວີຊາແລ້ວ ຫຼື ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ. ສຳລັບຜູ້ຊະນະປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາສຳເລັດ;

1.3 ໃບທະບຽນວິສາຫະກິດ;

1.4 ໃບອະນຸຍາດດຳເນີນທຸລະກິດປີ 2025 ຫຼື 2026;

1.5 ທຶນຈົດທະບຽນວິສາຫະກິດ 1 ຕື້ກີບ ຂຶ້ນໄປ;

1.6 ໃບຢັ້ງຢືນການເສຍອາກອນປີ 2024 ຫຼື 2025;

1.7 ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານ ທີ່ມີສີມືທາງດ້ານເຕັກນິກການກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງທະນາຄານ ຫຼື ສຳນັກງານ ທ້ອງການຢ່າງໜ້ອຍ 3 ໂຄງການ;

- ໃຫ້ບໍລິສັດສົ່ງຊອງເອກະສານດ້ານເຕັກນິກ ຂໍ້ 1.3 ເຖິງ ຂໍ້ 1.7 ມາໃຫ້ ທຄຕລ ກ່ອນວັນທີ 28/08/2026 (ບໍ່ປິດຊອງ);
- ວັນອັງຄານ, ວັນທີ 08/09/2026, ເວລາ 13:30 ໂມງ ແມ່ນມື້ເປີດຊອງປະມູນຊ້ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຜູ້ຮັບເໝົາຕ້ອງມາຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C ຫ້ອງ 5/2;
- ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດສ້ອມແປງ ແລະ ຕົບແຕ່ງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.

1.8 ບໍລິສັດຕ້ອງລົງສຳຫຼວດເບິ່ງສະຖານທີ່ຕົວຈິງກ່ອນຍື່ນຊອງປະມູນລາຄາ ຖ້າຫາກມີວຽກທີ່ຕ້ອງເຮັດເພີ່ມ ບໍລິສັດສາມາດຄິດໄລ່ມາພ້ອມມື້ຍື່ນຊອງປະມູນ ໂດຍໃຫ້ແຍກເປັນໝວດຕ່າງຫາກ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

## II. ການພົວພັນ ແລະ ໄລຍະເວລາການຮັບເໝົາ

2.1 ບໍລິສັດທີ່ມີຄວາມສົນໃຈ ສາມາດສອບຖາມລາຍລະອຽດເພີ່ມຕື່ມ ກ່ຽວກັບເຕັກນິກການສ້ອມແປງ ຫຼື ລົງສຳຫຼວດສະຖານທີ່ສ້ອມແປງ ນັບແຕ່ວັນທີ 17/08/2026-28/08/2026, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນ ສິດໃນການຕອບຄຳຖາມໃດໆທັງໝົດ;

2.2 ບໍລິສັດສາມາດພົວພັນເອົາເອກະສານ ເລີ່ມແຕ່ວັນທີ 19/08/2026-28/08/2026, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່, ຄ່າທຳນຽມເອກະສານ 1,000,000 ກີບ/ຊຸດ, ລາຍລະອຽດເອກະສານປະກອບມີດັ່ງນີ້:

- ໃບປະເມີນລາຍການໜ້າວຽກ 1 ຊຸດ;
- ແບບກໍ່ສ້າງ ແລະ ຕົບແຕ່ງ 1 ຊຸດ.

2.3 ໄລຍະການຮັບເໝົາສ້ອມແປງບໍ່ເກີນ 12 ເດືອນ (ສາມາດປະຕິບັດວຽກໄດ້ສະເພາະ ວັນເສົາ ແລະ ວັນອາທິດ).

## III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

3.1 ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ;

3.2 ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ສ່ວນຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນ ຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;

3.3 ການຊຳລະແບ່ງອອກເປັນ 4 ງວດ:

- **ງວດທີ 1:** ຊຳລະ 15% ຂອງມູນຄ່າທັງໝົດ ພາຍຫຼັງຜູ້ຮັບເໝົານຳວັດຖຸອຸປະກອນ, ເຄື່ອງກົນຈັກຕ່າງໆ ເຂົ້າສະໜາມ ແລະ ປະຕິບັດວຽກມີຄວາມຄືບໜ້າ 20% ຂຶ້ນໄປ ໂດຍໄດ້ຮັບການຢັ້ງຢືນຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ ຫຼື ຜູ້ຮັບເໝົາສາມາດປະກອບໜັງສືຄ້ຳປະກັນທະນາຄານທີ່ມີມູນຄ່າຢ່າງໜ້ອຍ 20% ຂຶ້ນໄປ;
- **ງວດທີ 2:** ຊຳລະ 35% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
- **ງວດທີ 3:** ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
- **ງວດທີ 4:** ຫັກເງິນຄ້ຳປະກັນຄຸນນະພາບໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

**ຜູ້ປະສານງານ:**

1) ທ່ານ ນາງ ວຽງແກ້ວ ອິນສີມີໄຊ 020 59594236

2) ທ່ານ ພູວອນ ສໍອິນໄຊ 020 59559889